# ວິທີແນະນຳການໃຊ້ຫຼັກສູດການຮຽນດ້ວຍຕົນເອງ ຜ່ານ Google Classroom

Google Classroom




Funded by the European Union

care

Lao Journalists Association

ໂດຍການຮ່ວມລະຫວ່າງສະມາຄົມນັກຂ່າວລາວ ແລະ ອົງການ CARE ປະຈຳລາວຫຼັກສູດນີ້ຈະເລີ່ມຕົ້ນດ້ວຍການແນະນຳກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ບັນຫາສິ່ງແວດລ້ອມ ພ້ອມທັງສອນວິທີແບ່ງປັນຂໍ້ມູນຜ່ານສື່ດິຈິຕອນ ເຊັ່ນ ສື່ສັງຄົມອອນລາຍ.

ຫຼັກສູດນີ້ ແບ່ງອອກເປັນ 5 ພາກ:

1. ການປ່ຽນແປງສະພາບດິນຟ້າອາກາດ ແລະ ສິ່ງແວດລ້ອມ
2. ຄວາມຮູ້ກ່ຽວກັບສື່ດິຈິຕອນ
3. ເຄື່ອງມືດິຈິຕອນໃນການຊຸກຍູ້ສົ່ງເສີມສິ່ງແວດລ້ອມ
4. ເທັກນິກການເລົ່າເລື່ອງ
5. ການຄຸ້ມຄອງ ແລະ ຈັນຍາບັນຂອງສື່ມວນຊົນລາວ



ແຕ່ລະພາກຈະມີຫຼາຍບົດຮຽນ ມີການນຳສະເໜີ, ວິດີໂອ ແລະ ແບບທົດສອບ ໃຫ້ທ່ານທົດສອບຄວາມເຂົ້າໃຈ.

ແຕ່ລະບົດຮຽນມີເລກລະຫັດ 3 ຕົວ (ເຊັ່ນ 1.3.1, 2.2.0) ເພື່ອໃຫ້ທ່ານຕິດຕາມລຳດັບຂອງເນື້ອຫາໄດ້ງ່າຍ.
ທ່ານບໍ່ຈຳເປັນຕ້ອງເຂົ້າເບິ່ງຕາມລຳດັບກໍໄດ້ ແລະ ສາມາດເບິ່ງຊ້ຳໄດ້.
ແຕ່ການຕິດຕາມລຳດັບຈະຊ່ວຍໃຫ້ເຂົ້າໃຈດີຂຶ້ນ.



ໃຊ້ຄອມພິວເຕີ

## ຂັ້ນຕອນທີ 1: ເຂົ້າສູ່ Google Classroom

1.ໄປທີ່: https://classroom.google.com/c/NzU5NDg5NDAxMTI1?cjc=s63fyebr

2.ເຂົ້າລະບົບໂດຍນໍາໃຊ້ບັນຊີ Gmail

3.ຖ້າທ່ານບໍ່ມີ ສາມາດສ້າງບັນຊີໄດ້ລ້າໆທີ່ accounts.google.com/signup



# ໃຊ້ຄອມພິວເຕີ

## ວິທີທີ່ສາມາດເລືອກໄດ້ອີກຄື:

1. ໄປທີ່: https://classroom.google.com
2. ກົດ “Go to Classroom”
3. ເຂົ້າລະບົບໂດຍນຳໃຊ້ບັນຊີ Gmail
4. ກົດເຄື່ອງໝາຍ “+” ທາງຂວາດ້ານເທິງ ແລ້ວເລືອກ “Join class” ແລະໃສ່ລະຫັດ s63fyebr



# ໃຊ້ໂທລະສັບ

## ຂັ້ນຕອນທີ 1 (ໃຊ້ໂທລະສັບ): ດາວໂຫຼດແອັບ Google Classroom

1. ດາວໂຫຼດແອັບ Google Classroom
2. ເຂົ້າລະບົບໂດຍນຳໃຊ້ບັນຊີ Gmail
3. ຖ້າບໍ່ມີ ສາມາດສ້າງບັນຊີໄດ້ລ້າໆ
4. ກົດປຸ່ມສີນ້ຳເງິນ “Join Class”
5. 5. ໃສ່ລະຫັດຫ້ອງ: s63fyebr



# ຂັ້ນຕອນທີ 2: ເຂົ້າໃຈໂຄງສ້າງຂອງຫ້ອງຮຽນ

**ໃຊ້ຄອມພິວເຕີ**




**ເມື່ອເຂົ້າຫ້ອງຮຽນແລ້ວ ທ່ານຈະເຫັນ 3 ແຖບຫຼັກ:**

ໄຫຼ (**stream**) – ຂ່າວປະກາດ ແລະ ຂໍ້ມູນຈາກຜູ້ຝຶກອົບຮົມ

ສິ່ງທີ່ຕ້ອງເຮັດໃນຫ້ອງຮຽນ – ເນື້ອໃນທັງໝົດຂອງຫຼັກສູດ, ບົດຮຽນ ແລະ ແບບທົດສອບຢູ່ທີ່ນີ້

ຜູ້ເຂົ້າຮ່ວມ – ເບິ່ງລາຍຊື່ຜູ້ຮ່ວມຫຼັກສູດ (ເລືອກເບິ່ງໄດ້)

⚠️ ໃຫ້ໃຊ້ແຖບ "Classwork" ເພື່ອຕິດຕາມຫຼັກສູດຢ່າງເປັນຂັ້ນຕອນ
ທ່ານບໍ່ຈຳເປັນຕ້ອງໃຊ້ສອງແຖບອື່ນ

# ໃຊ້ໂທລະສັບ

ນີ້ແມ່ນໜ້າຈໍໃນໂທລະສັບເມື່ອກົດເຂົ້າແຖບ “Classroom”



# ເບິ່ງໄປແຕ່ລະບົດ ແລະ ເອກະສານ

1. ໃນແຖບ Classwork ກົດ Module 1.0.0 ເພື່ອເລີ່ມ
2. ເບິ່ງວິດີໂອ ຫຼື ອ່ານໜ້າຖັດໄປ
3. ທຳແບບທົດສອບເພື່ອທົດສອບຄວາມຮູ້
4. ໄປຕໍ່ Module ຖັດໄປຫຼັງຈາກຈົບແລ້ວ ຫຼື ຈື່ຈຳໄວ້ວ່າເຄີຍຈົບຮອດໃສແລ້ວ ເພື່ອຈະສາມາດກັບມາໄດ້ ເມື່ອຈຳເປັນ ຫຼື ຢາກທົດສອບອີກຄັ້ງໜຶ່ງ ສາມາດເຮັດໄດ້ຕາມຄວາມສະດວກຂອງທ່ານ.



# ຕົວຢ່າງ:

**ກົດເຂົ້າ**

**⛈️ 🌴 1.2.0 ການປ່ຽນແປງສະພາບອາກາດໃນລາວ**
ແລ້ວທ່ານຈະເຫັນເນື້ອໃນດັ່ງຕໍ່ໄປນີ້.




ໃຊ້ຄອມພິວເຕີ




ໃຊ້ໂທລະສັບ

ແຕ່ລະບົດຮຽນເລີ່ມດ້ວຍບົດແນະນຳສັ້ນ ແລ້ວເຊື່ອມໄປຫາເອກະສານ, ວິດີໂອ ຫຼື ແບບທົດສອບ
ກົດເພື່ອເປີດ ແລະ ຮຽນຮູ້ຕາມຂັ້ນຕອນທີ່ສະດວກສຳລັບທ່ານ

**ທ່ານສາມາດເບິ່ງໜ້າຖັດໄປ ຫຼື ຊົມວິດີໂອ**

- ໃນຄອມພິວເຕີ ກົດ “Slideshow” ຫຼື ໃນໂທລະສັບໝູນໜ້າຈໍທາງນອນ ເພື່ອໃຫ້ພາບໃຫຍ່ຂຶ້ນ



# ເຮັດແບບທົດສອບ

1. ແຕ່ລະພາກຈະມີແບບທົດສອບສັ້ນໆ
2. ກົດລິ້ງຂອງແບບທົດສອບ
3. ຕອບຄໍາຖາມ ແລ້ວກົດ “Submit”
4. ໃນໜ້າຈໍທີ່ປາກົດ ກົດ “View score” ເພື່ອເບິ່ງຜົນຄະແນນ



# ສິ້ນສຸດຫຼັກສູດ

ເມື່ອທ່ານຮຽນສຳເລັດທຸກພາກ ແລະ ທຸກແບບທົດສອບ ແມ່ນສົມບູນແລ້ວ!



**ຂໍແສດງຄວາມຍິນດີ!**

**ຕອນນີ້ ທ່ານກຽມພ້ອມແລ້ວໃນການສ້າງເນື້ອໃນດິຈິຕອນທີ່ດຶງດູດ ເພື່ອຊ່ວຍໃຫ້ປະຊາຊົນລາວເຂົ້າໃຈຫຼາຍຂຶ້ນກ່ຽວກັບສະພາບດິນຟ້າອາກາດ ແລະ ສິ່ງແວດລ້ອມ, ແລະ ຈົ່ງໃຊ້ຄວາມຮູ້ນັ້ນເຂົ້າໃນການປົກປ້ອງປະເທດລາວ ແລະ ໂລກໃຫ້ຍືນຍົງ.**